ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ...1871../ຫອຄ

ນະຄອນຫຼວງວຽງຈັນ, ວັນທີ..13...ກັນຍາ 2022

# ແຈ້ງການ

ເຖິງ: - ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າ.
- ກົມພາສີ, ກະຊວງການເງິນ.
- ຜູ້ປະກອບການຜະລິດສິນຄ້າສົ່ງອອກໄປ ສປ ຈີນ.

ເລື່ອງ: ການຍົກລະດັບການໃຫ້ສິດທິພິເສດທາງການຄ້າແບບຝ່າຍດຽວຂອງ ສປ ຈີນ ຈາກ GSP 97% ມາເປັນ GSP 98%.

- ອີງຕາມ ໜັງສືຈາກ ທີ່ປຶກສາເສດຖະກິດ-ການຄ້າ, ສະຖານທູດ ສປ ຈີນ ປະຈຳ ສປປ ລາວ ສະບັບເລກທີ 144/ທສຄ.ສທຈປລ, ລົງວັນທີ 16 ສິງຫາ 2022.

ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ ລັດຖະບານ ສປ ຈີນ ໄດ້ຍົກລະດັບການໃຫ້ສິດທິພິເສດແບບຝ່າຍດຽວ (GSP) ໂດຍການຍົກເວັ້ນອັດຕາພາສີເປັນ 0% ແກ່ບັນດາປະເທດດ້ອຍພັດທະນາ ຈາກ 97% ມາເປັນ 98% ຫຼື ຈາກ ຈຳນວນ 8,256 ລາຍການສິນຄ້າ ມາເປັນ 8,930 ລາຍການສິນຄ້າ, ຊຶ່ງມີຜົນບັງຄັບໃຊ້ນັບແຕ່ວັນທີ **01 ກັນຍາ 2022** ເປັນຕົ້ນໄປ.

ລາຍລະອຽດເພີ່ມເຕີມສາມາດເຂົ້າເບິ່ງໄດ້ທີ່ເວັບໄຊສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ: www.laotradeportal.gov.la ຫຼື ສາມາດສອບຖາມນຳ ພະແນກຄຸ້ມຄອງແຫຼ່ງກຳເນີດສິນຄ້າ, ກົມການນຳເຂົ້າ ແລະ ສົ່ງອອກ, ໂທ: +856 21 450 255, ອີເມວ: roodivision.laopdr@gmail.com.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ກະກຽມຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

ຫົວໜ້າຫ້ອງການ

ວິຫູນ ສິດທິມໍລະດາ